# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 14 ພຶສພາ 2017 (5-14-2017)

---

## ຊີວິດຢູ່ບ່ອນທຳງານ

*ທ່ານມັກໜັງຫຼາຍກວ່າໝູ່ກ່ຽວກັບວຽກທີ່ທ່ານເຮັດ ?*

**ຈຸດສຳຄັນໃນບົດຮຽນ** : ການງານຂອງທ່ານສະທ້ອນເຖິງຄວາມສັມພັນຂອງທ່ານກັບພຣະຄຣິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ທ່ານຢາກເປັນໜັງ ເມື່ອທ່ານໃຫຍ່ຂຶ້ນ? ນີ້ແມ່ນຄຳຖາມທີ່ພວກເຮົາທຸກຄົນມັກຖາມເມື່ອຍັງເປັນເດັກນ້ອຍ. ແລະພວກເຮົາກໍຕອບດ້ວຍຄຳຕອບເຊັ່ນວ່າ: " ຂ້ອຍຢາກເປັນນັກອາວະກາດ." " ຂ້ອຍຢາກເປັນໝໍ." "ຂ້ອຍຢາກເປັນນັກເຕັ້ນບາເລ."

ມັນເປັນສິ່ງໜ້າສົນໃຈໜ້າຄິດກ່ຽວກັບຄຳຖາມນີ້ ເລິກລົງໄປກວ່ານີ້. ເມື່ອເຮົາຕັ້ງຄຳຖາມຄົນໃດຄົນນຶ່ງ, ແມ່ນເຮົາເວົ້າກ່ຽວກັບປະເພດການງານທີ່ເຂົາຢາກໄດ້ ອາຊີບທີ່ເຂົາໄຝ່ຝັນຫາ. ແຕ່ພວກເຮົາກໍມັກໃຊ້ສຳນວນຄຳຖາມດ້ວຍການຖາມເຖິງສິ່ງທີ່ບຸກຄົນໃດໜຶ່ງຢາກເປັນ. ເຮົາມັກໄດ້ຍິນແຕກຕ່າງກັນໄປ ແມ່ນບໍ່ ?

ມັນເປັນການງ່າຍຕໍ່ລັກສະນະຂອງເຮົາເພື່ອສລຸບໃນສິ່ງທີ່ເຮົາເຮັດ ໂດຍສະເພາະຖ້າເຮົາມັກວຽກຂອງເຮົາ. ແຕ່ສະພາບຈະເປັນຢ່າງໃດເຮົາບໍ່ຮູ້ ໃນບັ້ນປາຍ, ຕອນບຳນານ, ຫຼືຖ້າເຮົາຕົກງານ? ຖ້າພວກເຮົາຫຼຽວເບິ່ງສະພາບຂອງເຮົາຕາມວຽກຂອງເຮົາ, ສະພາບການອາດຫັນປ່ຽນໄປສູ່ຄວາມອ່ອນໃຈກໍເປັນໄດ້.

ຂ່າວດີກໍແມ່ນພວກເຮົາຢູ່ໄກກວ່າທີ່ເຮົາຫາລ້ຽງຊີບເທົ່ານັ້ນ. ສຳລັບຄຣິສຕຽນ ບໍ່ແມ່ນຍ້ອນວ່າເຮົາເປັນໃຜ, ແຕ່ແມ່ນໃຜທີ່ໃຫ້ເຮົາເປັນ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

### ການສຶກສາພຣະຄັມພີ

**1. <u>ໂກໂລຊາຍ 3:22</u>** :

*3 ຝ່າຍພວກຂ້ອຍຂ້າ, ຈົ່ງຟັງຄວາມຜູ້ທີ່ເປັນນາຍຝ່າຍມະນຸດທຸກສິ່ງ ບໍ່ໃຊ່ເຮັດຖແລງໜ້າເໝືອນຢ່າງຄົນຜູ້ມັກເຮັດແຕ່ໃຫ້ຊອບໃຈມະນຸດເທົ່ານັ້ນ.*

ລັກສະນະຂອງເຮົາບໍ່ໄດ້ປາກົດໃຫ້ເຫັນໃນສິ່ງທີ່ເຮົາເຮັດ, ແຕ່ໃນຜູ້ທີ່ເຮົາຮັບໃຊ້, ຈຸດແນຂອງພຣະເຈົ້າບໍ່ແມ່ນແນໃສ່ສິ່ງທີ່ເຮົາເຮັດ ແຕ່ແນໃສ່ວ່າເຮົາເຮັດຢ່າງໃດ. ທ່ານອັຄສາວົກໂປໂລກ່າວສິ່ງນີ້ໄວ້ ດ້ວຍການຂຽນເຖິງຄົນທີ່ຮັບໃຊ້ຄົນອື່ນ.

ການເປັນທາດເປັນພາກສ່ວນທີ່ໂຫດຮ້າຍ ແລະປ່າເຖື່ອນໃນປວັດສາດຂອງມະນຸດ. ແຕ່ໃນສມັຍຂອງທ່ານໂປໂລ, ຂ້າທາດບໍ່ຖືກມອງເຫັນຮູບພາບແບບທາຣຸນ. ມັນເປັນຫົນທາງທີ່ຫຼາຍຄົນໄດ້ວຽກເຮັດ. ພວກທາດມັກເປັນຄົນງານທີ່ມີຄວາມສາມາດສູງ ແລະເປັນນັກສິລປະ; ໃນບາງກໍຣະນີ, ເຂົາມີການຮຽນຮູ້ສູງກວ່າເຈົ້ານາຍຂອງເຂົາຊໍ້າ. ບໍ່ມີສິ່ງໃດ

ໃນທີ່ນີ້ໝາຍເຖິງການຍົກເວັ້ນບໍ່ໃຫ້ມີຣະບົບຂ້າທາດ, ພຽງແຕ່ຊີ້ໃຫ້ເຫັນວ່າຣະບົບຂ້າທາດໃນອານາຈັກໂຣມັນແຕກຕ່າງຈາກທີ່ເກີດຂຶ້ນໃນອະເມຣິກາ ຊຶ່ງພາໃຫ້ເກີດສົງຄາມກາງເມືອງນັ້ນ.

ແນ່ນອນ ທາດຫຼາຍຄົນໃນສມັຍຂອງ ທ່ານໂປໂລຊັງສະພາບຂອງເຂົາເອງ ແລະຢາກໄດ້ເສຣີພາບ ທ່ານໂປໂລບໍ່ໄດ້ຄັດຄ້ານການປົດປ່ອຍທາດ ຫຼືການໃຊ້ໜີ້ດ້ວຍການເຮັດວຽກ ຂ້ອຍຂ້າເພື່ອຈະໄດ້ກາຍເປັນອິສຣະ; ເພິ່ນພຽງແຕ່ຮັກສາຈຸດສຸມຂອງພັນທະກິດທີ່ເພິ່ນໄດ້ຮັບມອບໝາຍເທົ່ານັ້ນ. ເພິ່ນໄດ້ຂຽນໄວ້ບ່ອນອື່ນວ່າ: "ເຈົ້າຖືກພຣະເຈົ້າຊົງເອີ້ນເອົາ ເມື່ອຍັງເປັນຂ້ອຍຂ້າຢູ່ຫຼື ຢ່າຮ້ອນໃຈຖ້າເຈົ້າສາມາດໄຖ່ຕົວອອກໄດ້ກໍຄວນໄຖ່ດີກວ່າ." ( 1 ກຣທ 7:21 ).

ທ່ານໂປໂລບໍ່ຢາກໃຫ້ພວກທາດເຮັດວຽກໃຫ້ນາຍຂອງເຂົາ ແຕ່ຢາກໃຫ້ເຂົາເຮັດວຽກໃຫ້ພຣະເຢຊູແທນ. ເພິ່ນເຂົ້າໃຈດີວ່າລັກສະນະຂອງທາດຜູ້ນຶ່ງ ບໍ່ເບິ່ງໃນຕຳແໜ່ງຂອງລາວເອງ, ແຕ່ໃຫ້ເບິ່ງທີ່ຕຳແໜ່ງຂອງລາວໃນພຣະຄຣິດ. ທາດມີອິສຣະພາບໃນພຣະຄຣິດ; ເພາະສະນັ້ນ, ເຂົາຈຶ່ງມີອິສຣະພາບໃນການຮັບໃຊ້ພຣະເຢຊູຈົນໝົດຫົວໃຈຂອງເຂົາ. ພວກເຂົາສາມາດສະແດງອອກເຖິງການຮັບໃຊ້ພຣະເຢຊູດ້ວຍການຮັບໃຊ້ນາຍຂອງເຂົາດ້ວຍຄວາມສັດຊື່ ແລະດ້ວຍຄວາມຈົງຮັກພັກດີ.

ຄົນງານທຸກວັນນີ້ບໍ່ແມ່ນຂ້າທາດ; ພວກເຮົາມີຜູ້ຄຸມງານແທນນາຍ. ແຕ່ພວກເຮົາກໍຍັງຕ້ອງເຮັດວຽກເພື່ອໃຫ້ເປັນທີ່ພໍພຣະທັຍພຣະເຢຊູ. ດັ່ງນັ້ນ, ພວກເຮົາໄດ້ຮັບການຊົງເອີ້ນໃຫ້ເຮັກວຽກຢ່າງໝົດຈິດໝົດໃຈ ແລະດ້ວຍການຟັງຄວາມດ້ວຍຄວາມສັດຊື່ ແລະດ້ວຍຄວາມໄວ້ວາງໃຈໄດ້.

| |
|---|
| ***ທ່ານຈະອະທິບາຍການເຮັດວຽກຕາມພຣະຄັມພີແນວໃດ?*** |

## 2. <u>ໂກໂລຊາຍ 3:23-25</u> :

*[23] ແຕ່ຈົ່ງເຮັດດ້ວຍນໍ້າໃສໃຈຈິງ ດ້ວຍຄວາມຢຳເກງອົງພຣະຜູ້ເປັນເຈົ້າ ສິ່ງນຶ່ງສິ່ງໃດທີ່ເຈົ້າເຮັດນັ້ນ ຈົ່ງເຮັດດ້ວຍເຕັມໃຈ ເໝືອນເຮັດຖວາຍແກ່ອົງພຣະຜູ້ເປັນເຈົ້າ ບໍ່ໃຊ່ເໝືອນເຮັດແກ່ມະນຸດ,[24]ດ້ວຍຮູ້ແລ້ວວ່າ ອົງພຣະຜູ້ເປັນເຈົ້າຊົງໃຫ້ເຈົ້າທັງຫຼາຍໄດ້ຮັບມໍຣະດົກເປັນຄ່າບຳເໜັດ ເພາະວ່າຜູ້ທີ່ເຈົ້າທັງຫຼາຍຮັບໃຊ້ນັ້ນກໍແມ່ນພຣະຄຣິດເຈົ້າ.[25]ສ່ວນຜູ້ເຮັດການຊົ່ວກໍຈະໄດ້ຮັບຜົນຕາມການຊົ່ວທີ່ຕົນໄດ້ເຮັດນັ້ນ ແລະບໍ່ມີການຊົງເຫັນແກ່ໜ້າຜູ້ໃດເລີຍ.*

ທ່ານຈື່ຈຳຄວາມຄວາມຕື່ນເຕັ້ນຕອນໄດ້ວຽກທີແລກບໍ່? ພວກເຮົາສ່ວນຫຼາຍຕື່ນເຕັ້ນທີ່ສຸດ ເມື່ອເລີ້ມເຮັດວຽກເຕັມເວລາຄັ້ງທຳອິດ. ເຮັດວຽກເກີນເວລາ, ເຖິງຢ່າງໃດກໍຕາມ ຄວາມຕື່ນເຕັ້ນ ແລະຄວາມກະຕືລືລົ້ນສາມາດບັນເທົາການຂົບແຂ້ວໄດ້ ບາງທີອາດສົ່ງຜົນໃຫ້ຄາຍເທົງາ ແລະຄາຍເບື່ອໄດ້.

ສະນັ້ນ ເຮົາຈະຮັກສາຄວາມຕື່ນເຕັ້ນນັ້ນໄວ້ໄດ້ຢ່າງໃດ? ຂ້າພະເຈົ້າຈະຍອມຮັບມັນ: ວຽກບາງແນວກໍເປັນຕາເບື່ອແທ້. ແຕ່ນັ້ນບໍ່ໄດ້ໝາຍຄວາມວ່ານິສັຍຂອງເຮົາຕ້ອງເໝາະສົມກັບສະຖານະການນັ້ນ. ທ່ານໂປໂລບອກວ່າ, "*ແຕ່ຈົ່ງເຮັດດ້ວຍນໍ້າໃສໃຈຈິງ ດ້ວຍຄວາມຢຳເກງອົງພຣະຜູ້ເປັນເຈົ້າ ບໍ່ໃຊ່ເໝືອນເຮັດແກ່ມະນຸດ.*" ຫົວໃຈທີ່ມີສູນກາງຢູ່ທີ່ພຣະຄຣິດຈະເຮັດໃຫ້ມີຄວາມແຕກຕ່າງໄປ. ໃນຫຼາຍປີຕອນເລີ້ມຕົ້ນສ້າງໂບດ ຂ້າພະເຈົ້າໄດ້ຫາງານເພີ້ມເພື່ອລ້ຽງຄອບຄົວ. ຂ້າພະຈ້າຮູ້ສຶກກະຕືລືລົ້ນເມື່ອໂຮງຮຽນເອກະຊົນຈ້າງຂ້າພະເຈົ້າເປັນຄຣູ, ແຕ່ພໍທຳງານໄດ້ສອງເດືອນ ເຂົາບອກຂ້າພະເຈົ້າວ່າ ເງິນເດືອນທີ່ເຂົາຈ່າຍໃຫ້ຂ້າພະເຈົ້າບໍ່ຖືກຕ້ອງ. ເຂົາເຮັດຜິດພາດ ແລະຫລຸດເງິນລົງ. ຄອບຄົວຂອງຂ້າພະເຈົ້າກຳລັງຂັດສົນດ້ານການເງິນຢູ່, ແລະຂ້າພະເຈົ້າກໍບໍ່ດີໃຈ. ຂ້າພະເຈົ້າບໍ່ມີເງິນພໍທີ່ຈະອອກການໄດ້, ດັ່ງນັ້ນຂ້າພະເຈົ້າຈຶ່ງອິດສາເຮັດຈົນມົດສົກຂອງໂຮງຮຽນ ແຕ່ເຮັດດ້ວຍການປະພຶດທີ່ຊົ່ວຊ້າ. ເວລາຂ້າພະເຈົ້າລາອອກ

ໃນທ້າຍປີ, ຂ້າພະເຈົ້າໄດ້ຂຽນຈົດໝາຍໂຈມຕີຢ່າງຮຸນແຮງ.

ຫຼາຍປີຕໍ່ມາ, ຂ້າພະເຈົ້າສຳນຶກຜິດຕໍ່ອຸປນິສັຍອັນຊົ່ວຮ້າຍຂອງຂ້າພະເຈົ້າ. ຂ້າພະເຈົ້າຈຶ່ງໄດ້ນັດໝາຍໄປທີ່ໂຮງຮຽນເພື່ອຂໍໂທດທຸກຄົນທີ່ຂ້າພະເຈົ້າເຮັດວຽກນຳ.

ຕໍ່ມາມີຫຍັງປ່ຽນແປງບໍ? ພຶດຕິກັມຂອງຂ້າພະເຈົ້າແຕກຕ່າງໄປຈາກແຕ່ກ່ອນ. ບໍ່ວ່າຂ້າພະເຈົ້າຈະເຮັດສິ່ງໃດແລະບໍ່ວ່າທ່ານຈະເຮັດຫຍັງ ພວກເຮົາຄວນເຮັດຢ່າງພາກພູມໃຈ, ຖ້າຫາກພວກເຮົາເຮັດສິ່ງນັ້ນແດ່ອົງພຣະຄຣິດແທ້ຈິງ.

ທ່ານໂປໂລກ່າວອ້າງຫຼາຍສິ່ງທີ່ເປັນເຊື້ອເພີງຄວາມພາກພູມໃຈສຳລັບວຽກຂອງເຮົາ, ລວມແລ້ວມີດັ່ງຕໍ່ລົງໄປນີ້:

- **ບຳເໜັດຂອງພຣະຄຣິດ.** " ຈົ່ງຮູ້ວ່າທ່ານຈະໄດ້ຮັບບຳເໜັດເປັນມໍຣະດົກຈາກອົງພຣະຜູ້ເປັນເຈົ້າ." ສິ່ງນີ້ຈະຖືກອຸທອນແນ່ນອນ ສຳລັບຂ້າທາດທີ່ບໍ່ໄດ້ຮັບບຳເໜັດ ຫຼືຄ່າສວັດດີການ ໃນຊີວິດນີ້.
- **ຕຳແໜ່ງອົງພຣະຜູ້ເປັນເຈົ້າຂອງພຣະຄຣິດ.** "ທ່ານຮັບໃຊ້ອົງພຣະຜູ້ເປັນເຈົ້າພຣະຄຣິດ." ພຣະອົງຜູ້ຄອງຣາດ ຜູ້ຊຶ່ງຮັກເຮົາຢ່າງເລິກເຊິ່ງນັ້ນ ແມ່ນຜູ້ທີ່ເຮົາຮັບໃຊ້ແທ້ຈິງ.
- **ຄວາມຍຸດຕິທັມຂອງພຣະຄຣິດ.** "ສຳລັບຜູ້ເຮັດການຊົ່ວຈະໄດ້ຮັບຜົນກຳຕອບແທນຄວາມຜິດທີ່ໄດ້ກະທຳມາ, ແລະຈະບໍ່ມີການຊົງເຫັນແກ່ໜ້າຜູ້ໃດເລີຍ." ພຣະເຈົ້າຈະປະທານບຳເໜັດແກ່ຜູ້ຟັງຄວາມ ແລະຕັດສິນລົງໂທດຜູ້ບໍ່ເຊື່ອຟັງ.

ຂ້າພະເຈົ້າເປັນໃຜໃນພຣະຄຣິດ ຖານະຂອງຂ້າພະເຈົ້າໃນພຣະອົງ ທຸກຄົນໄດ້ເຫັນເວລາຂ້າພະເຈົ້າເຮັດວຽກຢ່າງເຕັມໃຈແກ່ພຣະອົງ.

> ***ມີການກະທຳຢ່າງໃດແດ່ທີ່ທ່ານສາມາດໃຫ້ກຽດແດ່ພຣະຄຣິດໃນບ່ອນເຮັດວຽກຂອງທ່ານ ?***

### 3. <u>ໂກໂລຊາຍ 4:1</u> :

*[1] ຝ່າຍນາຍ ກໍຈົ່ງເຮັດແກ່ຂ້ອຍຂ້າຂອງຕົນ ຕາມຄວາມຍຸດຕິທັມ ແລະ ສມ່ຳສເມີກັນ ດ້ວຍຮູ້ແລ້ວວ່າ ເຈົ້າທັງຫຼາຍກໍມີນາຍອົງນຶ່ງໃນສວັນເໝືອນກັນ.*

ຂ້າພະເຈົ້າເຄີຍເປັນພະນັກງານຫຼາຍຄັ້ງໃນອາຊີບການງານຂອງຂ້າພະເຈົ້າ, ແລະຂ້າພະເຈົ້າເຄີຍເປັນນາຍ.ບົດບາດທັງສອງກໍມີລາຍໄດ້ຂອງພວກມັນ, ແລະທັງຄູ່ກໍມີຄວາມຍາກລຳບາກຂອງມັນ. ການເປັນນາຍ, ຜູ້ຄຸມງານ, ຫລືເປັນນາຍຈ້າງ ໂດຍທົ່ວໄປແລ້ວຍ່ອມໝາຍຄວາມວ່າຍິ່ງມີຄວາມຮັບຜິດຊອບສູງຂຶ້ນ ຕາມຄ່າຈ້າງທີ່ສູງກວ່າ. ຕາມປວັດສາດ ຜູ້ຊຶ່ງມີຕຳແໜ່ງສູງ ແລະໄດ້ຮັບຄ່າຈ້າງສູງ ກໍໄດ້ຮັບການເອົາໃຈໃສ່ດີກວ່າ. ແມ່ນກະທັ້ງດຽວນີ້ໃນອະເມຣິກາ ພວກເຮົາມັກຢຳເກງ CEO ແລະທ່ານ "ປະທານໃຫຍ່" ຂອງບໍຣິສັດ ໃນຂ່າວເບິ່ງເໝືອນວ່າໃຫ້ຄວາມນັບຖືດີກວ່າໃນຂະບວນການຍຸດຕິທັມ ເໜືອກວ່າຄົນຍາກຈົນ ຫຼືຄົນທີ່ມີອິດທິພົນດ້ອຍກວ່າ.

ສອງພັນປີກ່ອນ ທາດບໍ່ມີສິດຫຍັງເລີຍ ຂະນະດຽວກັນເຈົ້ານາຍມີສິດທຸກຢ່າງ. ວຽກສມຽນ ແລະຄົນລົງມືເຮັດມີແຕ່ຂ້າທາດ, ແລະ80% ຂອງໂຮງຈັກໂຮງງານ ແລະຫ້າງຮ້ານຕ່າງໆ ແມ່ນມີຂ້າທາດເຮັດທັງນັ້ນ. ດັ່ງທີ່ມີບັນທຶກໄວ້ໃນຕອນຕົ້ນວ່າ, ຂ້າທາດຫຼາຍຄົນໄດ້ຮັບການດູແລເປັນຢ່າງດີ ແຕ່ບໍ່ແມ່ນໝົດທຸກຄົນ. ຂ້າທາດຫຼາຍຄົນຖືກມອງວ່າເປັນເໝືອນຫຸ່ນທີ່ໄຮ້ຊີວິດຊີວາ, ຊຶ່ງໝາຍຄວາມວ່າ ເຈົ້ານາຍຂອງເຂົາໄດ້ຮັບອະນຸຍາດໃຫ້ເຮັດກັບເຂົາທຸກສິ່ງ ຕາມທີ່ເຂົາຕ້ອງການ ແລະເຮັດຕໍ່ເຂົາໄດ້ທຸກຢ່າງຕາມໃຈ .

ເຖິງຢ່າງໃດກໍຕາມ ໃນບົດນີ້ທ່ານໂປໂລສັ່ງຄຣິສຕຽນຜູ້ເປັນນາຍໃຫ້ເຮັດດັ່ງດຽວກັບພຣະເຢຊູເຮັດ. ເໜືອນາຍກໍຍັງມີ "ນາຍອົງນຶ່ງໃນສວັນ" ຄືອົງພຣະຜູ້ເປັນເຈົ້າເຢຊູຄຣິດ ແລະພຣະອົງຈະຄິດບັນຊີກັບທຸກຄົນຕາມການປະພຶດຕໍ່ຂ້າທາດຂອງເຂົາ. ວັທນະທັມອາດນັບໜ້າຖືຕານາຍທີ່ມີອຳນາດຫຼາຍກວ່າ, ເງິນສູງກວ່າ ແລະມີອິດທິພົນເໜືອກວ່າ,

ແຕ່ເວລາເຮົາຢືນຢູ່ຕໍ່ໜ້າພຣະເຈົ້າ, ບໍ່ມີໃຜອ້າງໜ້າຕາໄດ້.

ເມື່ອພຣະເຢຊູເວົ້າເຖິງການຕັດສິນຄົນອື່ນນັ້ນ ແລະການປະຕິບັດຕໍ່ເຂົາ, ພຣະອົງກ່າວວ່າ, "ທ່ານຈະກ່າວໂທດໃສ່ເຂົາຢ່າງໃດ ພຣະເຈົ້າຈະຊົງກ່າວໂທດໃສ່ທ່ານຢ່າງນັ້ນ ພວກທ່ານຈະຕວງໃຫ້ເຂົາດ້ວຍເຄື່ອງຜອງອັນໃດ ພຣະເຈົ້າຈະຊົງຕວງໃຫ້ພວກທ່ານດ້ວຍເຄື່ອງຜອງອັນນັ້ນ" (ມທ 7:2). ຜູ້ທີ່ຕິສິນນິນທາຜູ້ອື່ນ, ກໍກ່າວໂທດຄົນອື່ນ. ເຮົາຄວນມີສະຕິໃນການນິນທາວ່າຮ້າຍຄົນອື່ນ, ຢ້ານວ່າພຣະເຈົ້າຈະໃຊ້ມາດຕະຖານຮ້າຍຢ່າງດຽວກັນກັບທ່ານ ເມື່ອພວກເຮົາປະເຊີນກັບການພິພາກສາຂອງພຣະອົງ.

ຕາມທາງດ່ວນໃນກຸງລອນດອນ, ທຸກຄັ້ງທີ່ທ່ານເຂົ້າອອກທາງໃຕ້ດິນ, ພວກທ່ານຈະໄດ້ຍິນຖ້ອຍຄຳທີ່ວ່າ," ຣະວັງປ່ອງ" (Mind the gap!) ຊາວອະເມຣິກັນເວົ້າວ່າ, "ຣະວັງບາດຢ່າງ" (Watch your step). ເຂົາເຕືອນຢ່າງນັ້ນເພາະມັນມີປ່ອງຣະຫວ່າງຣົດໄຟກັບບ່ອນພຽງ; ຖ້າທ່ານບໍ່ຣະວັງປ່ອງ, ທ່ານກໍອາດຈະຫຼົ່ມປ່ອງໄດ້.

ໃນທຳນອງດຽວກັນ, ສາວົກຂອງພຣະເຢຊູ ຄວນ "ຣະວັງປ່ອງ" ພວກເຮົາມັກຈະຖືກທົດລອງໃຫ້ສ້າງບັນຫາຣະຫວ່າງຄົນອື່ນກັບເຮົາ. ຖານະທີ່ເປັນຄຣິສຕຽນ, ພວກເຮົາຖືກຮຽກເອີ້ນໃຫ້ເຮັດສິ່ງຖືກຕ້ອງຕໍ່ຜູ້ອື່ນຄື ເຮັດຕໍ່ເຂົາຢ່າງ "ເປັນທັມ ແລະຍຸຕິທັມ" ດັ່ງທີ່ພຣະເຢຊູເຮັດສິ່ງທີ່ຖືກຕ້ອງຕໍ່ເຮົາຢ່າງສັດຊື່.

ຢ່າໃຫ້ເຮົາ ເບິ່ງຂ້າມຄຸນຄ່າ ແລະຄວາມສຳຄັນຂອງເພື່ອນຮ່ວມງານກັບເຮົາ ແລະເຮັດວຽກໃຫ້ເຮົາ. ຈົ່ງເບິ່ງເຫັນເຂົາດັ່ງພຣະເຢຊູເຫັນເຂົາ ແລະໃຫ້ເຮົາປະຕິບັດຕໍ່ເຂົາຕາມນີ້ແຕ່ລະວັນ.

| |
|---|
| *ເປັນຫຍັງຈຶ່ງຖືວ່າສຳຄັນ ໃນການປະຕິບັດຕໍ່ຄົນອື່ນດັ່ງດຽວກັບນາຍຂອງເຮົາປະຕິບັດຕໍ່ເຮົາ ?* |

## ນຳໃຊ້ໃນຊີວິດ

ວຽກຂອງທ່ານຈະສະທ້ອນເຖິງຄວາມສັມພັນຂອງທ່ານກັບພຣະຄຣິດຢ່າງໃດ ໃນອາທິດນີ້ ? ຈົ່ງພິຈາຣະນາຄຳແນະນຳຕໍ່ລົງໄປນີ້:

- **ຈົ່ງເປັນຄົນດີ.** ພະນັກງານມັກກ່າວດູໝິ່ນນາຍຈ້າງ ແລະໂຮງງານຂອງເຂົາ. ຈົ່ງເລືອກທີ່ຈະຢືນຢັດໃນບ່ອນທຳງານຂອງທ່ານ, ດ້ວຍການຍຶດໝັ້ນເປັນຄົນດີໃນການເວົ້າຂອງທ່ານ.

- **ໜູນໃຈ.** ຈົ່ງກ້າວສູ່ການໜູນໃຈຜູ້ໃດຜູ້ນຶ່ງທີ່ເຮັດວຽກນຳທ່ານໃນອາທິດນີ້. ຈົ່ງເປັນຄົນເປີດເຜີຍ ແລະຊີ້ແນະກ່ຽວກັບຄວາມປະສົງທີ່ທ່ານຢາກໃຫ້ການອູ້ມຊູເພື່ອເປັນການສະແດງອອກເຖິງການເຊື່ອຟັງພຣະຄຣິດ.

- **ອະທິຖານ.** ຄິດເຖິງຄົນທີ່ທ່ານປະເຊີນ ແລະເຮັດວຽກນຳຍາກຫຼາຍໃນແຕ່ລະວັນ ຈົ່ງຊອກຫາໂອກາດເປັນພະຍານໃນຄວາມຮັກ ແລະພຣະຄຸນຂອງພຣະຄຣິດໃນເວລາທ່ານທຳງານ.

ຍັງມີຫຼາຍຄົນໃນພວກເຮົາທີ່ຍັງບໍ່ທັນຮູ້ວ່າພວກເຮົາຢາກ "ເປັນ" ຫຍັງເມື່ອໃຫຍ່ມາ. ແຕ່ເຮົາທຸກຄົນຕ້ອງເຮັດວຽກແມ່ນວ່າເຮົາກຳລັງສແວງຫາຄວາມໄຝ່ຝັນຢູ່. ດັ່ງນັ້ນ, ພວກເຮົາທຸກຄົນມີໂອກາດສະທ້ອນພຣະຄຣິດ ແລະຄຸນຄ່າຂອງຣາຊອານາຈັກຂອງພຣະອົງໃນວຽກງານທີ່ເຮົາກຳລັງເຮັດຢູ່.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**